## ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກຖົ່ວເຫຼືອງ

(ສະບັບທົດລອງ)

ຂຽນໂດຍ: ນາງ ເຈຍ ໄຊເລຍວື
ຂໍ້ມູນຈາກ: ບ້ານສີມສະໄໝ ເມືອງ ໄຊທານີ ນະຄອນຫລວງວຽງຈັນ

ປີ 2007

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com



ຮູບ ແລະ ປະຫວັດຂອງຜູ້ຂຽນ

ຊື່ ນາງເຈຍ

ອາຍຸ.32 ປີ.

ອາຊີບ..ພະນັກງານຄູ

**<u>ເຫດຜົນຂອງການຂຽນບົດນີ້:</u>**

ຄົນເຮົາເຖິງວ່າຈະເຮັດວຽກງານໃດ,ມີໜ້າທີ່ຫຍັງກໍຕາມ ທຸກຄົນກໍຕ້ອງໄດ້ເຮັດການຜະລິດ ເພາະມັນຈະເປັນອາຊີບເສີມ ແລະກໍຍັງສາມາດຫລຸດຜ່ອນການໃຊ້ຈ່າຍສະນັ້ນຈຶ່ງເຫັນວ່າຫົວຂໍ້ນີ້ມີຄວາມສຳຄັນເພື່ອຢາກໃຫ້ນັກຮຽນໄດ້ຮຽນຮູ້.

# ປື້ມຄວາມຮູ້ພູມປັນຍາທ້ອງຖິ່ນ
# ການປູກຖົ່ວເຫຼືອງ


ຮຶບໂຮມ ແລະຈັດໜ້າໂດຍ : ທ້າວ ຄຳຫລ້າ ພອນມະນີວົງ

ຜູ້ແຕ້ມ : ທ້າວ ຄຳຫລ້າ ພອນມະນີວົງ

ຜູ້ຮຽບຮຽງ : ອ.ຈ. ໂພໄຊ ຈັນທະວົງສາ

ອ.ຈ ເກດມະນີ ບັນດາສັກ

ອ.ຈ ພິມມະນີ ສີລິພົງ

ອ.ຈ ຄຳມະນີ ວົງພິມມະຈັນ

ອ. ຈ ທອງຂັນ

ເຈົ້າຂອງ : ພະແນກສຶກສານະຄອນຫລວງວຽງຈັນ ແລະ
ສູນອົບຮົມຮ່ວມພັດທະນາ


PDF created with pdfFactory Pro trial version www.pdffactory.com

## ຄຳນຳ

ປຶ້ມພູມປັນຍາທ້ອງຖິ່ນຫົວນີ້ໄດ້ມາຈາກການຂຽນຂອງຊາວບ້ານ ແລະອາສາສະໝັກຊຶ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາ ແລະພະແນກສຶກສານະຄອນຫລວງວຽງຈັນ.

ປຶ້ມຫົວນ້ອຍຫົວນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫລາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປໍ 1 ປໍ 2 ແລະບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າປຶ້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫລາຍກໍໜ້ອຍ.

ຄະນະຈັດທຳຄິດວ່າຍັງມີຫລາຍເນື້ອໃນທີ່ຍັງບໍ່ທັນພຽງພໍ ແລະຂາດໄປ ຫວັງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານ ພວກເຮົາພ້ອມທີ່ຈະປັບປຸງຕາມຄວາມເໝາະສົມ.

ຄະນະຈັດທຳ

## <u>ຊື່ເກມ: ປູກແກນຫົວເຫຼືອງ</u>

- **ຈຸດປະສົງ:**

1. ເພື່ອສ້າງຄວາມສາມັກຄີ

- **ຜູ້ເຂົ້າຮ່ວມ:**

1. ເຮັດເປັນ 2 ທີມ,ລະ 6 ຄົນ

- **ເວລາ**

1. 25 ນາທີ

- **ອຸປະກອນ:**

1. ເຊືອກຟາງ, ແກ້ວ 2 ໜ່ວຍ, ໄມ້ຖູ່ 2 ອັນ

- **ວິທີການຫຼິ້ນ:**

1. ມັດເຊືອກຟາງໃສ່ກົ້ນໄມ້ຖູ່ ແລະແຍກອອກໃຫ້ໄດ້ 6 ເສັ້ນ ເຊືອກທີ່ມັດນັ້ນຕ້ອງຍາວ 2 ແມັດ
2. ໃຫ້ແຕ່ລະທີມຈັບສົ້ນເຊືອກ ແລະດຶງອອກເປັນວົງມົນໃຫ້ໄມ້ຖູ່ນັ້ນຢູ່ເຄິ່ງກາງ

ແຕ່ລະທີມຕ້ອງດຶງເຊືອກໃຫ້ເຄັ່ງເພື່ອທີ່ຈະນຳພາໄມ້ຖູ່ໃຫ້ເຂົ້າໃນປາກແກ້ວ.ຖ້າວ່າທີມໃດປ່ອນລົງໄດ້ກ່ອນກໍຖືວ່າທີມນັ້ນຊະນະ.

PDF created with pdfFactory Pro trial version www.pdffactory.com

## ຄຳຖາມທ້າຍບົດ

1. ຂຸມໜຶ່ງເຮົາຄວນໃສ່ແກ່ນແນວພັນຖົ່ວເຫຼືອງຈັກແກ່ນ?

## ບົດເລກ

1. ຂຸມຖົ່ວເຫຼືອງ 1 ຂຸມເຮົາໃສ່ຢູ່ 7 ແກ່ນຖ້າມີຂຸມຖົ່ວເຫຼືອງ 8 ຂຸມ ຈະໃຊ້ແກ່ນຖົ່ວເຫຼືອງທັງໝົດຈັກແກ່ນ?

## ຄວາມເປັນມາ

ຍ້ອນວ່າຄົນລາວເປັນຄົນທີ່ດຸໝັ່ນໃນການປູກຝັງ, ເຮັດຮົ້ວເຮັດສວນ, ເພິ່ນຈຶ່ງມີແນວຄິດຫາພືດມາປູກທົດແທນພືດພັນທີ່ໄດ້ເກັບກ່ຽວໄປແລ້ວຖົ່ວເຫຼືອງກໍເປັນພືດຊະນິດໜຶ່ງທີ່ພີ່ນ້ອງລາວສູງເຮົາມັກພາກັນນຳມາປູກພາຍຫຼັງເກັບກ່ຽວເຂົ້ານາປີແລ້ວ ເພື່ອສ້າງລາຍຮັບເພີ່ມໃຫ້ແກ່ຄອບຄົວຖ້າເຮົາປູກຫຼາຍກໍມີລາຍຮັບເພີ່ມຫຼາຍປູກໜ້ອຍກໍມີລາຍຮັບເພີ່ມໜ້ອຍຕາມພື້ນທີ່ປູກ.

PDF created with pdfFactory Pro trial version www.pdffactory.com

**ອຸປະກອນ**

ແນວພັນ(ແກ່ນຖົ່ວເຫຼືອງ)

ໄມ້ແຫຼມ

## ກາບ: ຄຸນຄ່າ

ຊິນເຜົ່າມົ້ງ ຊິນເຜົ່າໃດໆ
ກໍສົນໃຈ ຖົ່ວເຫຼືອງເຕັມທົ່ງ
ໄດ້ກິນຄົງ ອາຍຸຍາວຍືນ
ບໍ່ໄດ້ຝືນ ຄຸນຄ່າເລີດລ້ຳ

## ເຊີ້ງ: ຊວນກັນ

ໂຮ..ໆໆໆໂອ...ໆ ແຮວ....ໆໆ....
ມາພວກເຮົາມາ ຮ່ວມໃຈກັນປູກ
ມາຮຽນຫຼັກສູດ ປູກຕົ້ນຖົ່ວເຫຼືອງ
ອາຫານພື້ນເມືອງ ທີ່ມີຄ່າສູງ
ອາວອາປ້າລຸງ ນິຍົມກັນຫຼາຍ
ເພິ່ນປູກເພື່ອຂາຍ ເປັນເສດຖະກິດ
ຊ່ວຍກັນຜະລິດ ເດີພວກໜຸ່ມນ້ອຍ.

## ເພງ: ຕົ້ນຖົ່ວເຫຼືອງ

ທົ່ງນາບ້ານເຮົາ ກວ້າງສຸດສາຍຕາ
ຢູ່ຕາມທົ່ງນາ ມີປ່າຖົ່ວເຫຼືອງຊຽວງາມ
ໃຜມາເຫັນ ກໍຕ້ອງເອີ່ຍຖາມ ( ຊ້ຳ )
ຕົ້ນອີ່ຫຍັງຊຽວງາມ ຢູ່ກາງທົ່ງນາ

PDF created with pdfFactory Pro trial version www.pdffactory.com

## ລັກສະນະຂອງຕົ້ນຖົ່ວເຫຼືອງ

ພ້າ

ຕົ້ນຖົ່ວເຫຼືອງເປັນຕົ້ນທີ່ບໍ່ສູງປານໃດອາດຈະສູງພຽງຫົວເຂົ່າຫຼືຕ່ຳກ່ວານັ້ນຕົ້ນຂອງມັນມີຂົນນ້ອຍໆ ເປັນສີເຫຼືອງໃບມົນພ້ອມກັບມີຂົນໝາກຖົ່ວເຫຼືອງກາບຂອງມັນຈະມີຂົນອ້ອມມີໃນປະມານ 2 – 5 ແກ່ນ

## ການເລືອກແນວພັນ

ແນວພັນທີ່ຈະເອົາມາປູກຕ້ອງເປັນແນວພັນທີ່ຕິ່ງດີເຫືອງດີບໍ່ມີແມງເຈາະ,ແກ່ນຖົ່ວເຫຼືອງທີ່ຈະເອົາມາເຮັດແນວຕ້ອງປະໄວ້ບ່ອນທີ່ແຫ້ງດີບໍ່ມີກິ່ນເໝົ້າກິ່ນສາບ,ເວລາເອົາໄປປູກຈຶ່ງຂຶ້ນດີ

## ລະດູການປູກ

ຈີກ,ແວກ

ລະດູການປູກຖົ່ວເຫຼືອງຕ້ອງປູກຫຼັງເກັບກ່ຽວເຂົ້ານາປີແລ້ວເຊິ່ງເລີ້ມແຕ່ເດືອນ 11 ເປັນຕົ້ນໄປ.

## ຄຸນປະໂຫຍດ

ໃຊ້ປຸງແຕ່ງເປັນອາຫານທີ່ມີຄຸນຄ່າທາງໂພຊະນາການ ແລະໃຊ້ເຂົ້າໃນພິທີທາງໄສຍະສາດຂອງເຜົ່າມົ້ງ.

PDF created with pdfFactory Pro trial version www.pdffactory.com

## <u>ວິທີປູກ</u>

ຫຼັງຈາກທີ່ພວກເຮົາເກັບກ່ຽວເຂົ້ານາປີແລ້ວ,ເຮົາຕ້ອງຕັດຕໍເຟືອງແຫ້ງອອກຫຼືຈູດ.

ຈາກນັ້ນກໍເປີດນ້ຳນາ 1-2 ວັນເພື່ອແຊ່ໃຫ້ດິນຊຸ່ມຕໍ່ມາກໍເອົາແກ່ນໝາກຖົ່ວມາປູກໄດ້.

ດ້ວຍການເອົາໄມ້ແຫຼມສັກດິນໃຫ້ເປັນຂຸມຫ່າງກັນປະມານ 30 ຊັງຕີແມັດ ແລ້ວເອົາແນວໝາກຖົ່ວລົງໃນຂຸມ
ແຕ່ລະຂຸມໃສ່ແກ່ນໝາກ ຖົ່ວ 6 - 7 ແກ່ນ.

ປະໄວ້ໃຫ້ໝາກຖົ່ວແຕກຈາວ,ອອກໜໍ່ແລ້ວຈິ່ງເປັ່ງນ້ຳເຂົ້ານາ. ເມື່ອມີນ້ຳທົ່ວໄຮ່ນາ ກໍເປັ່ງນ້ຳອອກເພື່ອບໍ່ໃຫ້ນ້ຳແຊ່ດິນເພາະໝາກຖົ່ວຈະເນົ່າ.ໝາກຖົ່ວໄດ້ອາຍຸປະມານ 1-2 ເດືອນຫຼືເວລາທີ່ຕົ້ນໝາກຖົ່ວກຳລັງເປັນດອກ,ກໍໃຫ້ໃສ່ຝຸ່ນເພື່ອໃຫ້ໝາກເປັນຮວງໃຫຍ່,ໜ່ວຍໃຫຍ່,ຕຶ່ງດີ ຜົນເກັບກ່ຽວກໍໄດ້ຫຼາຍ.ກ່ອນຈະລົງມືເກັບກ່ຽວຖົ່ວເຫຼືອງເຮົາຕ້ອງສັງເກດເບິ່ງສີຂອງໃບ.ຖ້າວ່າໃບເປັນສີເຫຼືອງ ແລະລົ່ນເກືອບວ່າໝົດເຮົາຈຶ່ງສາມາດໄປຕັດຕົ້ນຖົ່ວເຫຼືອງໄດ້.

PDF created with pdfFactory Pro trial version www.pdffactory.com